ສາທາລະນະ ລັດປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

************************

ກະຊວງການເງິນ
ກົມພາສີ

ເລກທີ 03471 /ກພສ

ນະຄອນຫຼວງວຽງຈັນ, ລົງວັນທີ 15 JAN 2013

# ຄຳແນະນຳເພີ່ມເຕີມ

## ວ່າດ້ວຍການແຈ້ງພາສີເປັນລາຍລະອຽດດ້ວຍລະບົບບໍລິຫານຂໍ້ມູນການແຈ້ງພາສີ ແບບອັດຕະໂນມັດ ( ອາຊີກູດາ )

***************************

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011.
- ອີງຕາມ ບົດແນະນຳຂອງກົມພາສີ ສະບັບເລກທີ 10503/ກພສ, ວັນທີ 5/7/2012, ວ່າດ້ວຍການແຈ້ງພາສີເປັນລາຍລະອຽດດ້ວຍລະບົບບໍລິຫານຂໍ້ມູນດ້ານພາສີແບບອັດຕະໂນມັດ (ອາຊີກູດາ).

**ກົມພາສີ ອອກຄຳແນະນຳເພີ່ມເຕີມ :**

I. ຈຸດປະສົງ :

ຄຳແນະນຳສະບັບນີ້ ວາງອອກເພື່ອອະທິບາຍເພີ່ມເຕີມເນື້ອໃນບາງຈຸດຂອງ ບົດແນະນຳ ສະບັບເລກທີ 10503/ກພສ, ວັນທີ 5/6/2012, ເພື່ອຮັບປະກັນການຈັດຕັ້ງປະຕິບັດການແຈ້ງພາສີດ້ວຍລະບົບບໍລິຫານຂໍ້ມູນການແຈ້ງພາສີແບບອັດຕະໂນມັດ (ອາຊີກູດາ) ໃຫ້ມີຄວາມສະດວກ ແລະ ກົມກຽວກັບຂັ້ນຕອນຂອງຂະແໜງການກ່ຽວຂ້ອງ ໃນການມອບເງິນຄ່າພາສີ-ອາກອນ ຜ່ານລະບົບຄັງເງິນແຫ່ງຊາດ ແລະ ທະນະຄານ ໃຫ້ສາມາດສະຫຼຸບລົງທຶນບັນຊີລາຍຮັບ, ລວມທັງຂັ້ນຕອນດຳເນີນການກວດກາທາງດ້ານເອກະສານ, ລະບົບການວິເຄາະບໍລິຫານຄວາມສ່ຽງ ໃນການແຈ້ງພາສີເປັນລາຍລະອຽດຕາມລະດັບ (ສີຂຽວ, ຟ້າ, ເຫຼືອງ, ແດງ) ແລະ ການກວດກາສິນຄ້າ, ເຄື່ອງຂອງຕົວຈິງ ໃຫ້ສອດຄ່ອງຕາມລະບຽບກົດໝາຍພາສີ.

II. ຂັ້ນຕອນການດຳເນີນການແຈ້ງພາສີນຳເຂົ້າ ສຳລັບສິນຄ້າ, ເຄື່ອງຂອງ :

ຂັ້ນຕອນການແຈ້ງພາສີນຳເຂົ້າສິນຄ້າ, ເຄື່ອງຂອງຜ່ານດ່ານພາສີຊາຍແດນ ແມ່ນໃຫ້ປະຕິບັດຕາມ 5 ຂັ້ນຕອນທີ່ກຳນົດໄວ້ໃນຂໍ້ ກ. I ຂອງ ບົດແນະນຳ ເລກທີ 10503/ 5.6.12 ແລະມີບາງຈຸດທີ່ຕ້ອງໄດ້ເພີ່ມເນື້ອໃນເຂົ້າໃສ່ໃໝ່ ຄື:

**1. ເພີ່ມເນື້ອໃນເຂົ້າໃສ່ຂໍ້ 1.3.1 ການຮັບແຈ້ງພາສີເປັນລາຍລະອຽດ,**

ພາຍຫຼັງທີ່ໄດ້ຜ່ານລະບົບການວິເຄາະບໍລິຫານຄວາມສ່ຽງໃນ 4 ລະດັບ (ສີຂຽວ, ຟ້າ, ເຫຼືອງ, ແດງ), ເອກະສານໃບແຈ້ງພາສີ ແຕ່ລະປະເພດ ຈະຖືກສົ່ງໃຫ້ ຈຸງານຄຸ້ມຄອງການແຈ້ງພາສີ ເພື່ອດໍາເນີນການກວດກາຕາມເປົ້າໝາຍ ຄື :

- ການນໍາເຂົ້າສິນຄ້າ, ເຄື່ອງຂອງຮູບແບບຍົກເວັ້ນ, ຫຼຸດຜ່ອນ ແລະ ງົດເກັບພາສີ ຕາມນະໂຍບາຍສົ່ງເສີມການລົງທຶນ, ນໍາເຂົ້າຮູບການຊ່ວຍເຫຼືອລ້າ-ກູ້ຢືມຂອງລັດຖະບານ ແລະ ອື່ນໆ ຊຶ່ງມີເປົ້າໝາຍກວດກາຄວາມຖືກຕ້ອງທາງດ້ານເອກະສານການອະນຸຍາດຂອງຂະແໜງການກ່ຽວຂ້ອງ ສົມທຽບໃສ່ຂໍ້ມູນໃນໃບແຈ້ງພາສີເປັນລາຍລະອຽດ, ຄຸ້ມຄອງ, ຕິດຕາມຫັກລົບແຜນນໍາເຂົ້າສິນຄ້າຕົວຈິງ ແລະ ປະຕິບັດຕາມເຕັກນິກວິຊາການພາສີອື່ນໆ.

- ການນໍາເຂົ້າສິນຄ້າ, ເຄື່ອງຂອງແຈ້ງເສຍພາສີ-ອາກອນ ຊຶ່ງມີເປົ້າໝາຍກວດກາດ້ານມູນຄ່າແຈ້ງພາສີ, ລະຫັດສິນຄ້າ, ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ, ການຄິດໄລ່ຄ່າພາສີ-ອາກອນ ແລະ ອື່ນໆທີ່ກ່ຽວຂ້ອງ.

ພາຍຫລັງການກວດກາດ້ານເອກະສານ ຖ້າກວດກາຖືກຕ້ອງຄົບຖ້ວນ ໃຫ້ເຈົ້າໜ້າທີ່ພາສີ ຢັ້ງຢືນຜົນການກວດກາເອກະສານ, ລົງລາຍເຊັນ ແລະ ຮັບຮອງຜົນການແຈ້ງລົງ ໃນໃບຕິດຕາມເອກະສານ, ສົ່ງໃຫ້ຄະນະດ່ານເພື່ອພິຈາລະນາ ລົງລາຍເຊັນໃສ່ໃບແຈ້ງພາສີເປັນລາຍລະອຽດ ຕາມທີ່ໄດ້ກໍານົດໄວ້ໃນແຕ່ລະໆດັບ (ສີຂຽວ, ຟ້າ, ເຫຼືອງ, ແດງ) ຂອງ ບົດແນະນໍາ ສະບັບເລກທີ 10503/ກພສ, ວັນທີ 5/7/2012.

**2. ເພີ່ມເນື້ອໃນເຂົ້າໃສ່ຂໍ້ 1.4 ການຊໍາລະຄ່າພາສີ ແລະ ພັນທະອື່ນ**

ໃນກໍລະນີຜູ້ປະກອບການ ຊໍາລະຄ່າພາສີແລະພັນທະອື່ນ ຜ່ານລະບົບທະນະຄານ ຜູ້ປະກອບການຕ້ອງນໍາເອົາໃບເອວີ (AVIS) ທີ່ທະນະຄານອອກໃຫ້ ຍື່ນຕໍ່ຈຸງານບັນຊີ-ສະຖິຕິແລະສອບຖາມ-ສະສາງຄະດີ ເພື່ອບັນທຶກຂໍ້ມູນລົງໃນລະບົບ ແລະ ພິມໃບຢັ້ງຢືນການຊໍາລະຄ່າພາສີແລະພັນທະອື່ນ ອອກຈາກລະບົບ (ASYCUDA Receipt ) ເພື່ອເປັນເອກະສານຄັດຕິດໃບແຈ້ງພາສີເປັນລາຍລະອຽດ.

**3. ເພີ່ມເນື້ອໃນເຂົ້າໃສ່ຂໍ້ 1.5 ການກວດປ່ອຍສິນຄ້າ, ເຄື່ອງຂອງອອກຈາກດ່ານພາສີ :**

ໃບແຈ້ງພາສີເປັນລາຍລະອຽດທີ່ໄດ້ຜ່ານບັນດາຂັ້ນຕອນການແຈ້ງພາສີດ້ວຍລະບົບອັດຕະໂນມັດ (ອາຊີກູດາ) ແມ່ນນໍາສົ່ງໃຫ້ ຈຸງານກວດກາແລະຄຸ້ມຄອງສາງ ເພື່ອດໍາເນີນການກວດກາສິນຄ້າ, ເຄື່ອງຂອງຕົວຈິງ, ເຈົ້າໜ້າທີ່ພາສີ ຜູ້ຖືກແຕ່ງຕັ້ງໃຫ້ກວດປ່ອຍສິນຄ້າ ຕ້ອງໄດ້ມີຖານຂໍ້ມູນບໍລິຫານຄວາມສ່ຽງທີ່ລະບົບໄດ້ວິເຄາະ ໂດຍມີການຈັດລຽງ ຕາມລໍາດັບມາດຕະການກວດກາຂອງຄວາມສ່ຽງ ຢ່າງເໝາະສົມ, ຄື :

+ ລະດັບໜຶ່ງ (ສີຂຽວ) : ຕິດຕາມຄຸ້ມຄອງສິນຄ້າ, ເຄື່ອງຂອງຂຶ້ນ/ລົງລົດບັນທຸກສິນຄ້າ.
+ ລະດັບສອງ (ສີຟ້າ) : ຕິດຕາມກວດນັບສິນຄ້າຕົວຈິງຢູ່ສາງສິນຄ້າ.

+ ລະດັບສາມ (ສີເຫຼືອງ) : ຕິດຕາມກວດນັບສິນຄ້າຕົວຈິງຢູ່ສາງສິນຄ້າ ແລະ ໄຂຫີບຫໍ່ບາງສ່ວນ ຫຼື ທັງໝົດ ເພື່ອກວດກາສິນຄ້າຕົວຈິງ.

+ ລະດັບທີສີ່ (ສີແດງ) : ຕ້ອງດຳເນີນການກວດກາສິນຄ້າຕາມເຕັກນິກວິຊາການຢ່າງລະອຽດ.

- ສິນຄ້າ, ເຄື່ອງຂອງທີ່ມີຄວາມສ່ຽງໃນລະດັບທີໜຶ່ງ, ສອງ ຫຼື ສາມ ຖ້າບໍ່ມີແຫຼ່ງຂ່າວ ຫຼື ຂໍ້ມູນສິ່ງໃສທີ່ພາໃຫ້ມີຄວາມສ່ຽງໃນການລັກລອບໜີພາສີ, ເຈົ້າໜ້າທີ່ພາສີ ສາມາດອີງໃສ່ພາບສະແກນກວດກາດ້ວຍລະບົບສາຍແສງ (ສະແກນເນີ) ເປັນບ່ອນອີງທາງດ້ານເຕັກນິກໃນການກວດປ່ອຍສິນຄ້າ.

- ສິນຄ້າ, ເຄື່ອງຂອງທີ່ມີຄວາມສ່ຽງໃນລະດັບທີ ສີ່ ເຈົ້າໜ້າທີ່ພາສີ ຕ້ອງດຳເນີນການກວດກາສິນຄ້າຕົວຈິງຕາມເຕັກນິກວິຊາການຢ່າງລະອຽດ.

- ເຈົ້າໜ້າທີ່ພາສີ ຜູ້ກວດກາສິນຄ້າ, ເຄື່ອງຂອງ ຕ້ອງບັນທຶກຜົນການກວດກາລົງໃນໃບແຈ້ງພາສີເປັນລາຍລະອຽດແລະລະບົບ, ພ້ອມທັງພິມຂໍ້ມູນສິນຄ້າ, ລົດບັນທຸກ, ລົງໃນລະບົບ ເພື່ອບັນທຶກລົງໃນໃບສັ່ງປ່ອຍ ແລະ ພິມອອກຈາກລະບົບ ເພື່ອຄັດຕິດເອກະສານໃບແຈ້ງພາສີເປັນລາຍລະອຽດ.

- ເຈົ້າໜ້າທີ່ພາສີປະຈຳປະຕູດ່ານ ໃຫ້ເອົາໃຈໃສ່ກວດນັບລົດບັນທຸກແຕ່ລະຄັນຕາມຂໍ້ມູນເອກະສານການແຈ້ງພາສີ ເພື່ອຫຼີກລ້ຽງຖິ້ມຄວາມຮັບຜິດຊອບລະຫວ່າງເຈົ້າໜ້າທີ່ພາສີຜູ້ກວດປ່ອຍສິນຄ້າກັບ ຜູ້ປະຈຳຢູ່ປະຕູສາງ, ຈາກນັ້ນ ຈຶ່ງອະນຸຍາດໃຫ້ສິນຄ້າອອກ ຈາກດ່ານ ຫຼື ສາງ ແລະ ເກັບສຳເນົາເອກະສານການແຈ້ງພາສີຕາມລະບຽບການ.

ຄຳແນະນຳເພີ່ມເຕີມສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມພາສີ**

ສາດສະພັງທອງ ສີພັນດອນ
Sathsaphangthong SIPHANDONE

<u>ບ່ອນສົ່ງ</u> :
- ບັນດາພະແນກອ້ອມຂ້າງກົມພາສີ ພະແນກລະ1ສະບັບ
- ພາສີປະຈຳເຂດໃນທົ່ວປະເທດ ເຂດລະ1 ສະບັບ
- ດ່ານພາສີສາກົນໃນທົ່ວປະເທດ ດ່ານລະ 1 ສະບັບ
- ເກັບມ້ຽນສຳເນົາ 2 ສະບັບ